**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມບັນຊີ

ເລກທີ /ກບຊ

ນະຄອນຫຼວງວຽງຈັນ, ວັນທີ ກໍລະກົດ 2017

# ໃບອະນຸຍາດ

## ນໍາໃຊ້ຊຸດຄໍາສັ່ງໂປຣແກຣມບັນຊີ EXPRESS

## ເຂົ້າໃນວຽກງານບັນຊີວິສາຫະກິດ "ຊື່ວຄາວ"

- ອີງຕາມ ກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ) ສະບັບເລກທີ 01/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການ ກະຊວງການເງິນ ສະບັບເລກທີ 0210/ກງ, ລົງວັນທີ 01 ກຸມພາ 2010 ກ່ຽວກັບ ການຄຸ້ມຄອງ ບັນດາຊຸດຄໍາສັ່ງຄອມພິວເຕີ ທາງດ້ານການບັນຊີວິສາຫະກິດ (ໂປຣແກຣມບັນຊີ);
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 2586/ກງ, ລົງວັນທີ 03 ສິງຫາ 2015 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກົມບັນຊີ.

**ກົມບັນຊີ ກະຊວງການເງິນ ອະນຸຍາດໃຫ້ແກ່:**

ມາດຕາ 1 ອະນຸຍາດໃຫ້ **ບໍລິສັດ** **ຈໍາກັດ** ນໍາໃຊ້ຊຸດຄໍາສັ່ງໂປຣແກຣມບັນຊີ EXPRESS (ຊົ່ວຄາວ) ເພື່ອຮັບໃຊ້ເຂົ້າໃນຈັດການປະຕິບັດວຽກງານການບັນຊີ ພາຍໃນບໍລິສັດເທົ່ານັ້ນ ເນື່ອງຈາກວ່າໂປຣແກຣມດັ່ງກ່າວຍັງບໍ່ສາມາດລາຍງານເອກະສານລາຍງານການເງິນ ເປັນພາສາລາວຢູ່ໃນລະບົບໄດ້ເທື່ອ ແລະບໍລິສັດຕ້ອງໄດ້ພັດທະນາໂປຣແກຣມເພີ່ມເຕີມ, ບໍ່ອະນຸຍາດໃຫ້ຈໍາໜ່າຍ ຫຼື ນໍາໃຊ້ຢູ່ບໍລິສັດອື່ນຢ່າງເດັດຂາດ.

ມາດຕາ 2 ໃບອະນຸຍາດສະບັບນີ້ ນໍາໃຊ້ໄດ້ເຖິງວັນທີ 31 ທັນວາ 2017, ພາຍຫຼັງໝົດກໍານົດການນໍາໃຊ້ ຂອງໃບອະນຸຍາດສະບັບນີ້ ບໍລິສັດ ຈໍາກັດ ຕ້ອງໄດ້ມາຕໍ່ການນໍາໃຊ້ຄືນໃໝ່.

ມາດຕາ 3 ຖ້າຫາກມີການດັດແກ້ ຫຼື ປັບປຸງໂປຣແກຣມບັນຊີ EXPRESS ຊຸດຄໍາສັ່ງທາງດ້ານການບັນຊີວິສາຫະກິດດັ່ງກ່າວ ບໍລິສັດ ຈໍາກັດ ຕ້ອງໄດ້ນໍາສະເໜີກົມບັນຊີ ກະຊວງການເງິນ ເພື່ອກວດກາຄວາມຖືກ ຕ້ອງຄືນໃໝ່ ຕາມກົດໝາຍ ວ່າດ້ວຍການບັນຊີ.

ມາດຕາ 4 ໃບອະນຸຍາດສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ຈັນທະລິດ ເສນາພັນ